ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງ ອຸດສາຫະກຳ ແລະ ການຄ້າ

ເລກທີ...0087.../ອຄ.ກຂອ

ນະຄອນຫຼວງວຽງຈັນ, ວັນທີ..19...ມັງກອນ 2017

# ຂໍ້ຕົກລົງ

## ວ່າດ້ວຍ ການຈັດຕັ້ງປະຕິບັດການຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົນເອງ ພາຍໃຕ້ໂຄງການທົດລອງ ຂອງສະຫະພາບເອີຣົບ

- ອີງຕາມ ດຳລັດສະບັບເລກທີ 522/ນຍ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ກະຊວງອຸດສາຫະກຳ ແລະ ການຄ້າ, ລົງວັນທີ 23 ທັນວາ 2011;
- ອີງຕາມ ລະບຽບການຈັດຕັ້ງປະຕິບັດ ຂອງສະຫະພາບເອີຣົບ, ສະບັບເລກທີ 2015/428, ລົງວັນທີ 10 ມີນາ 2015 ແລະ ສະບັບເລກທີ 2015/2447, ລົງວັນທີ 25 ພະຈິກ 2015.
- ອີງຕາມ ໜັງສືສະເໜີຂອງ ກົມການນຳເຂົ້າ ແລະ ສົ່ງອອກ, ສະບັບເລກທີ 0065/ກຂອ.ຄຄ, ລົງວັນທີ 06 ມັງກອນ 2017.

## ລັດຖະມົນຕີ ກະຊວງອຸດສາຫະກຳ ແລະ ການຄ້າ ອອກຂໍ້ຕົກລົງ:

## ໝວດທີ I

## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບ ການຈັດຕັ້ງປະຕິບັດການຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົນເອງ ພາຍໃຕ້ໂຄງການທົດລອງ ຂອງສະຫະພາບເອີຣົບ, ສະວິດ ແລະ ນອກແວ ເພື່ອອຳນວຍຄວາມສະດວກໃຫ້ແກ່ຜູ້ດຳເນີນການສົ່ງອອກສິນຄ້າທີ່ໄດ້ຮັບສິດທິພິເສດທາງດ້ານການຄ້າ ແນໃສ່ເຮັດໃຫ້ການຈັດຕັ້ງປະຕິບັດຖືກຕ້ອງ, ສອດຄ່ອງກັບກົດໝາຍ ແລະ ລະບຽບການຂອງ ສປປ ລາວ ແລະ ສາກົນ.

**ມາດຕາ 2 ການຈັດຕັ້ງປະຕິບັດການຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົນເອງ ພາຍໃຕ້ໂຄງການທົດລອງ ຂອງສະຫະພາບເອີຣົບ**

ການຈັດຕັ້ງປະຕິບັດການຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົນເອງ ພາຍໃຕ້ໂຄງການທົດລອງ ຂອງສະຫະພາບເອີຣົບ ແມ່ນ ຜູ້ສົ່ງອອກສິນຄ້າເປັນຜູ້ດຳເນີນການຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົນເອງ ຕາມເງື່ອນໄຂຂອງໂຄງການທົດລອງ ຂອງສະຫະພາບເອີຣົບ, ສະວິດ ແລະ ນອກແວ ທີ່ ສປປ ລາວ ໄດ້ຮັບສິດທິພິເສດທາງດ້ານການຄ້າ.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບຕ່າງໆທີ່ນຳໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ການຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົນເອງ** ໝາຍເຖິງ ຜູ້ສົ່ງອອກສິນຄ້າອອກໃບແຈ້ງລາຍລະອຽດແຫຼ່ງກຳເນີດສິນຄ້າ (Statement on Origin) ດ້ວຍຕົນເອງ ໃນການສົ່ງສິນຄ້າອອກແຕ່ລະຄັ້ງ ພາຍໃຕ້ໂຄງການທົດລອງ ຂອງສະຫະພາບເອີຣົບ,
2. **ໃບຢັ້ງຢືນຜູ້ສົ່ງອອກທີ່ໄດ້ຮັບສິດຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົນເອງ (Certificate of Certified Exporter)** ໝາຍເຖິງ ໃບຢັ້ງຢືນການໄດ້ຮັບສິດເປັນຜູ້ສົ່ງອອກທີ່ໄດ້ເງື່ອນໄຂໃນການຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົນເອງ ຊຶ່ງອອກໂດຍອົງການຄຸ້ມຄອງການຈັດຕັ້ງປະຕິບັດການຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົນເອງ ພາຍໃຕ້ໂຄງການທົດລອງ ຂອງສະຫະພາບເອີຣົບ;
3. **ລະບົບການລົງທະບຽນເປັນຜູ້ສົ່ງອອກ** (Registered Exporter System: REX) ໝາຍເຖິງ ຜູ້ສົ່ງອອກທີ່ລົງທະບຽນນຳອົງການຄຸ້ມຄອງການຈັດຕັ້ງປະຕິບັດການຢັ້ງຢືນແຫຼ່ງກຳເນີດສິນຄ້າ ຂອງສະຫະພາບເອີຣົບ ເພື່ອຂໍສິດຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົນເອງ;
4. **ໃບແຈ້ງລາຍລະອຽດແຫຼ່ງກຳເນີດສິນຄ້າ** (Statement on Origin) ໝາຍເຖິງ ການຢັ້ງຢືນແຫຼ່ງກຳເນີດສິນຄ້າຂອງຜູ້ສົ່ງອອກດ້ວຍຕົນເອງ ຕໍ່ເຈົ້າໜ້າທີ່ພາສີຂອງບັນດາປະເທດສະມາຊິກ ຂອງສະຫະພາບເອີຣົບ, ສະວິດ ແລະ ນອກແວ ເພື່ອຂໍນຳໃຊ້ສິດໃນການຫຼຸດຜ່ອນ ຫຼື ຍົກເວັ້ນອັດຕາພາສີນຳເຂົ້າ ພາຍໃຕ້ລະບົບສິດທິພິເສດທາງດ້ານການຄ້າ.

**ມາດຕາ 4 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບຜູ້ດຳເນີນທຸລະກິດ ທີ່ສົ່ງອອກສິນຄ້າໄປ ສະຫະພາບເອີຣົບ, ສະວິດ, ນອກແວ ແລະ ປະເທດທີ່ໄດ້ຮັບສິດທິພິເສດທາງດ້ານການຄ້າຄື: (ບຣູໄນ, ກຳປູເຈຍ, ອິນໂດເນເຊຍ, ລາວ, ຟີລິບປິນ, ມາເລເຊຍ, ສິງກະໂປ, ມຽນມາ, ໄທ ແລະ ຫວຽດນາມ) ເພື່ອການສະສົມມູນຄ່າເພີ່ມພາຍໃນກຸ່ມຕາມລະບຽບການຈັດຕັ້ງປະຕິບັດ ຂອງສະຫະພາບເອີຣົບ, ສະວິດ ແລະ ນອກແວ.

## ໝວດທີ II
## ການຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົນເອງ

ມາດຕາ 5 ເງື່ອນໄຂຂອງຜູ້ທີ່ສາມາດຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົນເອງ

ຜູ້ທີ່ສາມາດຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົນເອງໄດ້ຕ້ອງມີເງື່ອນໄຂ ດັ່ງນີ້:

1. ເປັນຜູ້ດຳເນີນທຸລະກິດນຳເຂົ້າ ແລະ ສົ່ງອອກສິນຄ້າ ທີ່ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ ຂອງ ສປປ ລາວ;
2. ເປັນຜູ້ທີ່ໄດ້ສິດຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົນເອງ ພາຍໃຕ້ໂຄງການທົດລອງ ຂອງສະຫະພາບເອີຣົບ;
3. ໄດ້ລົງທະບຽນຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົນເອງໃນລະບົບ REX.

**ມາດຕາ 6 ການອອກໃບຢັ້ງຢືນຜູ້ສົ່ງອອກທີ່ໄດ້ຮັບສິດຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົນເອງ**

ຜູ້ທີ່ມີຈຸດປະສົງຕ້ອງການເປັນຜູ້ໄດ້ຮັບສິດຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົນເອງ ພາຍໃຕ້ໂຄງການທົດລອງ ຂອງສະຫະພາບເອີຣົບ ຕ້ອງປະຕິບັດຕາມຂັ້ນຕອນ ດັ່ງນີ້:

1. ຜ່ານການຄັດເລືອກເປັນຜູ້ສົ່ງອອກທີ່ໄດ້ສິດຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົນເອງ ທີ່ໄດ້ກຳນົດໄວ້ໃນຄຳແນະນຳ ກ່ຽວກັບ ການຢັ້ງຢືນແຫຼ່ງກຳເນີດສິນຄ້າທີ່ໄດ້ຮັບສິດທິພິເສດ, ສະບັບເລກທີ 2225/ ອຄ.ກຂອ, ລົງວັນທີ 05 ທັນວາ 2014;
2. ຕື່ມຂໍ້ມູນ ຕາມແບບຟອມໃບສະເໜີທີ່ອົງການຄຸ້ມຄອງແຫຼ່ງກຳເນີດສິນຄ້າ ໄດ້ກຳນົດໄວ້ພ້ອມຄັດຕິດສຳເນົາເອກະສານປະກອບມີ: ໃບຮັບຮອງສິນຄ້າໄດ້ແຫຼ່ງກຳເນີດ ແລະ ໃບແຈ້ງຂີດຄວາມສາມາດໃນການສົ່ງອອກປະຈຳປີ ແລ້ວສົ່ງໃຫ້ອົງການຄຸ້ມຄອງການຈັດຕັ້ງປະຕິບັດການຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົນເອງ ພາຍໃຕ້ໂຄງການທົດລອງ ຂອງສະຫະພາບເອີຣົບ;
3. ພາຍຫຼັງໄດ້ຮັບໃບສະເໜີ ພ້ອມດ້ວຍເອກະສານຄັດຕິດທີ່ຖືກຕ້ອງ ແລະ ຄົບຖ້ວນ ອົງການຄຸ້ມຄອງແຫຼ່ງກຳເນີດສິນຄ້າ ຕ້ອງພິຈາລະນາອອກໃບຢັ້ງຢືນຜູ້ສົ່ງອອກທີ່ໄດ້ຮັບສິດຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົນເອງ ໃຫ້ຜູ້ສະເໜີພາຍໃນກຳນົດເວລາ 3 ວັນລັດຖະການ.

**ມາດຕາ 7 ການລົງທະບຽນຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົນເອງໃນລະບົບ REX**

ພາຍຫຼັງໄດ້ຮັບໃບຢັ້ງຢືນຜູ້ສົ່ງອອກທີ່ໄດ້ຮັບສິດຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົນເອງ ຜູ້ສົ່ງອອກ ຕ້ອງປະກອບແບບຟອມສະໝັກ (Pre - Application) ສະເໜີຕໍ່ອົງການຄຸ້ມຄອງການຈັດຕັ້ງປະຕິບັດການຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົນເອງ ເພື່ອລົງທະບຽນໃນລະບົບ REX ຫຼັງຈາກສຳເລັດການລົງທະບຽນ ຜູ້ສົ່ງອອກຈຶ່ງສາມາດຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົນເອງ.

**ມາດຕາ 8 ວິທີການຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົນເອງ**

ວິທີການຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົນເອງ ແມ່ນຜູ້ສົ່ງອອກສິນຄ້າ ເປັນຜູ້ແຈ້ງລາຍລະອຽດແຫຼ່ງກຳເນີດສິນຄ້າ (Statement on Origin) ດ້ວຍຕົນເອງ ໃຫ້ປະເທດປາຍທາງທີ່ນຳເຂົ້າສິນຄ້າໃນການສົ່ງອອກສິນຄ້າແຕ່ລະຄັ້ງ ຊຶ່ງໃບແຈ້ງລາຍລະອຽດແຫຼ່ງກຳເນີດສິນຄ້າ ແມ່ນ ໃຊ້ປ່ຽນແທນໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ (ຟອມ A) ເພື່ອຂໍການຫຼຸດຜ່ອນ ຫຼື ຍົກເວັ້ນອັດຕາພາສີນຳເຂົ້າສິນຄ້າໄປ ສະຫະພາບເອີຣົບ, ສະວິດ ແລະ ນອກແວ.

## ໝວດທີ III

## ສິດ ແລະ ພັນທະຂອງຜູ້ສົ່ງອອກ

**ມາດຕາ 9 ຂອບເຂດສິດຂອງ ຜູ້ສົ່ງອອກທີ່ໄດ້ສິດຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົນເອງ**

ຂອບເຂດສິດຂອງຜູ້ສົ່ງອອກທີ່ໄດ້ສິດຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົນເອງ ມີດັ່ງນີ້:

1. ສາມາດຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົນເອງ ພາຍໃຕ້ໂຄງການທົດລອງ ຂອງສະຫະພາບເອີຣົບ;
2. ໄດ້ຮັບສິດຕາມທີ່ກຳນົດໄວ້ຕາມກົດໝາຍ ແລະ ລະບຽບການຂອງ ສປປ ລາວ.

**ມາດຕາ 10 ພັນທະຂອງຜູ້ສົ່ງອອກທີ່ໄດ້ສິດຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົນເອງ**

ຜູ້ສົ່ງອອກທີ່ໄດ້ສິດຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົນເອງ ມີພັນທະ ດັ່ງນີ້:

1. ປະຕິບັດຕາມເງື່ອນໄຂຂອງຜູ້ທີ່ສາມາດຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົນເອງ ຕາມທີ່ໄດ້ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ;
2. ເກັບຮັກສາເອກະສານທີ່ກ່ຽວຂ້ອງກັບການຜະລິດສິນຄ້າ ແລະ ການຢັ້ງຢືນແຫຼ່ງກຳເນີດສິນຄ້າຄົບຊຸດຢ່າງໜ້ອຍ 03 ປີ ນັບແຕ່ມື້ເລີ່ມຕົ້ນຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົນເອງ ເພື່ອເປັນຂໍ້ມູນອ້າງອີງໃນເວລາຖືກກວດສອບ ຫຼື ຊັກຖາມຄືນມາ ໃນກໍລະນີມີຂໍ້ສົງໄສຈາກປະເທດປາຍທາງຕາມລະບຽບການຢັ້ງຢືນແຫຼ່ງກຳເນີດສິນຄ້າ ຂອງສະຫະພາບເອີຣົບ, ສະວິດ ແລະ ນອກແວ;
3. ໃຫ້ຄວາມຮ່ວມມື ແລະ ສະໜອງຂໍ້ມູນຕ່າງໆໃຫ້ອົງການຄຸ້ມຄອງແຫຼ່ງກຳເນີດສິນຄ້າ ເພື່ອຕິດຕາມການຈັດຕັ້ງປະຕິບັດ. ໃນກໍລະນີມີການກວດສອບຄືນແຫຼ່ງກຳເນີດສິນຄ້າ ຕ້ອງໃຫ້ຄວາມຮ່ວມມືໃນການຊີ້ແຈງ, ອະທິບາຍຕໍ່ບັນຫາທີ່ເຈົ້າໜ້າທີ່ກ່ຽວຂ້ອງທັງພາຍໃນ ແລະ ຕ່າງປະເທດສົງໄສ ກ່ຽວກັບຂະບວນການ ແລະ ຂັ້ນຕອນຂອງການຜະລິດສິນຄ້າ ເພື່ອເປັນບ່ອນອີງໃນການພິຈາລະນາແກ້ໄຂບັນຫາ;
4. ລາຍງານສະຖິຕິການສົ່ງອອກສິນຄ້າພາຍໃຕ້ການຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົນເອງໃຫ້ອົງການຄຸ້ມຄອງການຈັດຕັ້ງປະຕິບັດການຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົນເອງ ຢ່າງເປັນປົກກະຕິໃນແຕ່ລະເດືອນ ແລະ ປີ;
5. ປະຕິບັດພັນທະອື່ນໆ ຕາມທີ່ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

## ໝວດທີ IV
## ຂໍ້ຫ້າມ

**ມາດຕາ 11 ຂໍ້ຫ້າມສຳລັບຜູ້ສົ່ງອອກ ທີ່ໄດ້ສິດຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົນເອງ**

ຫ້າມຜູ້ສົ່ງອອກທີ່ໄດ້ສິດຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົນເອງມີພຶດຕິກຳ ດັ່ງນີ້:

1. ປອມແປງເອກະສານ ຫຼື ແຈ້ງຂໍ້ມູນທີ່ບໍ່ຖືກຕ້ອງຕາມຄວາມເປັນຈິງ;
2. ການລັກລອບເອົາສິນຄ້າທີ່ບໍ່ໄດ້ແຫຼ່ງກຳເນີດມາຂໍສິດຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົນເອງ;
3. ມີພຶດຕິກຳອື່ນທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

**ມາດຕາ 12 ຂໍ້ຫ້າມສຳລັບພະນັກງານຂອງອົງການຄຸ້ມຄອງແຫຼ່ງກຳເນີດສິນຄ້າ**

ຫ້າມພະນັກງານ ຂອງອົງການຄຸ້ມຄອງການຈັດຕັ້ງປະຕິບັດການຢັ້ງຢືນແຫຼ່ງກຳເນີດສິນຄ້າມີພຶດຕິກຳ ດັ່ງນີ້:

1. ກົດໜ່ວງຖ່ວງດຶງເອກະສານ, ສວຍໃຊ້ໜ້າທີ່ຕຳແໜ່ງ ເພື່ອຜົນປະໂຫຍດສ່ວນຕົວ, ພັກພວກ ແລະ ຍາດຕິພີ່ນ້ອງ;
2. ສົມຮູ້ຮ່ວມຄິດກັບຜູ້ຂໍສິດຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົນເອງປອມແປງເອກະສານ;
3. ມີພຶດຕິກຳອື່ນທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

## ໝວດທີ V

## ອົງການຄຸ້ມຄອງ ການຈັດຕັ້ງປະຕິບັດການຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົນເອງ ພາຍໃຕ້ໂຄງການທົດລອງ ຂອງສະຫະພາບເອີຣົບ

**ມາດຕາ 13 ອົງການຄຸ້ມຄອງ**

ອົງການຄຸ້ມຄອງການຈັດຕັ້ງປະຕິບັດການຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົນເອງ ພາຍໃຕ້ໂຄງການທົດລອງ ຂອງສະຫະພາບເອີຣົບ ແມ່ນມອບໃຫ້ກົມການນຳເຂົ້າ ແລະ ສົ່ງອອກ, ກະຊວງອຸດສາຫະກຳ ແລະ ການຄ້າ ເປັນເຈົ້າການໂດຍປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງເພື່ອຄຸ້ມຄອງວຽກງານດັ່ງກ່າວ.

**ມາດຕາ 14 ສິດ ແລະ ໜ້າທີ່ ຂອງອົງການຄຸ້ມຄອງ**

ອົງການຄຸ້ມຄອງການຈັດຕັ້ງປະຕິບັດການຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົນເອງ ພາຍໃຕ້ໂຄງການທົດລອງ ຂອງສະຫະພາບເອີຣົບ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຄັດເລືອກ ຜູ້ສົ່ງອອກທີ່ມີເງື່ອນໄຂ ແລະ ແນະນຳການລົງທະບຽນ ເພື່ອຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົນເອງ;
2. ຄົ້ນຄວ້າ, ຕິດຕາມການນຳໃຊ້ລະບົບຂອງຜູ້ສົ່ງອອກ ແລະ ພິຈາລະນາການມອບສິດ, ໂຈະ ຫຼື ຖອນໃບຢັ້ງຢືນຜູ້ສົ່ງອອກທີ່ໄດ້ຮັບສິດຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົນເອງ;
3. ດຳເນີນການລົງທະບຽນໃຫ້ຜູ້ສົ່ງອອກ ເປັນຜູ້ສົ່ງອອກໃນລະບົບ REX;
4. ສະໜອງຂໍ້ມູນ, ດັດແກ້, ຍົກເລີກ ການລົງທະບຽນເປັນຜູ້ສົ່ງອອກໃນລະບົບ REX;
5. ຕິດຕາມ ແລະ ກວດກາ ການຈັດຕັ້ງປະຕິບັດການນຳໃຊ້ລະບົບ REX;
6. ລົງຕິດຕາມ ແລະ ກວດກາຂະບວນການຜະລິດສິນຄ້າຢູ່ ບໍລິສັດ/ໂຮງງານ ສຳລັບສິນຄ້າທີ່ສົ່ງອອກພາຍໃຕ້ໂຄງການຢັ້ງຢືນແຫຼ່ງກຳເນີດສິນຄ້າ ຂອງສະຫະພາບເອີຣົບ ໂດຍບໍ່ຈຳເປັນແຈ້ງກ່ອນລ່ວງໜ້າ;
7. ເປັນເຈົ້າການໃນການຈັດຝຶກອົບຮົມໃຫ້ແກ່ພະນັກງານທີ່ກ່ຽວຂ້ອງ ກ່ຽວກັບ ວຽກງານການຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົນເອງ ຜ່ານລະບົບ REX;
8. ສະຫຼຸບ ແລະ ລາຍງານ ກ່ຽວກັບ ການຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົນເອງໃຫ້ຄະນະນຳ ກະຊວງ ແລະ ຄະນະກຳມາທິການ ຂອງສະຫະພາບເອີຣົບ ເປັນແຕ່ລະໄລຍະ.

## ໝວດທີ VI

## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 15 ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທີ່ມີຜົນງານອັນດີເດັ່ນໃນການຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້ ຈະໄດ້ຮັບການຍ້ອງຍໍ ແລະ ນະໂຍບາຍອື່ນ ຕາມຄວາມເໝາະສົມ.

**ມາດຕາ 16 ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດຕໍ່ຂໍ້ຕົກລົງສະບັບນີ້ ຈະຖືກ ກ່າວເຕືອນ, ສຶກສາອົບຮົມ, ປະຕິບັດວິໄນ, ປັບໃໝ, ຮັບຜິດຊອບທາງແພ່ງ ຫຼື ລົງໂທດທາງອາຍາ ຕາມແຕ່ລະກໍລະນີ. ນອກນີ້ ຍັງຈະປະຕິບັດໂທດເພີ່ມ ເປັນຕົ້ນ ລົບລ້າງໃນການໄດ້ສິດຍັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົນເອງ, ໃຫ້ໂຈະ ຫຼື ຢຸດຕິການເຄື່ອນໄຫວທຸລະກິດຂອງຜູ້ລະເມີດ.

## ໝວດທີ VII

## ບົດບັນຍັດສຸດທ້າຍ

**ມາດຕາ 17 ການຈັດຕັ້ງປະຕິບັດ**

ມອບໃຫ້ກົມການນຳເຂົ້າ ແລະ ສົ່ງອອກ ເປັນເຈົ້າການໂດຍປະສານສົມທົບກັບພາກສ່ວນກ່ຽວຂ້ອງໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ໃຫ້ມີປະສິດທິຜົນສູງ.

**ມາດຕາ 18 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ມີຜົນບັງຄັບໃຊ້ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ ແລະ ພາຍຫຼັງ 15 ວັນ ທີ່ໄດ້ພິມລົງຈົດໝາຍທາງລັດຖະການ.

ລັດຖະມົນຕີ

ກະຊວງອຸດສາຫະກຳ ແລະ ການຄ້າ

ລັດຖະມົນຕີ

ປ. ເຂັມມະນີ ພົນເສນາ